ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຈຳປາສັກ

ເລກທີ 1083/ຈຂ

ແຂວງຈຳປາສັກ,ວັນທີ 18 ຕຸລາ 2016

# ຂໍ້ຕົກລົງ

## ວ່າດ້ວຍການສ້າງຕັ້ງຫ້ອງການສາຂາ ສະມາຄົມຄົນພິການແຫ່ງຊາດລາວ ປະຈຳແຂວງຈຳປາສັກ

- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 115/ນຍ ລົງວັນທີ 29 ເມສາ 2009 ວ່າດ້ວຍສະມາຄົມ;
- ອີງຕາມ ຂໍ້ຕົກລົງ ຂອງກະຊວງພາຍໃນ ສະບັບເລກທີ 54/ພນ, ລົງວັນທີ 13 ກັນຍາ 2011 ວ່າດ້ວຍການສ້າງຕັ້ງ ສະມາຄົມຄົນພິການແຫ່ງຊາດລາວ;
- ອີງຕາມ ໜັງສືສະເໜີ ຂອງພະແນກພາຍໃນ ສະບັບເລກທີ 253/ພພນ , ລົງວັນທີ 7 ຕຸລາ 2016.

**ເຈົ້າແຂວງຈຳປາສັກ ຕົກລົງ:**

**ມາດຕາ 1:** ເຫັນດີຮັບຮອງເອົາການສ້າງຕັ້ງ ຫ້ອງການສາຂາສະມາຄົມຄົນພິການແຫ່ງຊາດລາວ ປະຈຳແຂວງຈຳປາສັກ ເຊິ່ງມີສຳນັກງານ-ຫ້ອງການ ຕັ້ງຢູ່ໜ່ວຍ: 01, ບ້ານ: ພັດທະນາຫຼັກເມືອງ, ເມືອງ: ປາກເຊ, ແຂວງ: ຈຳປາສັກ.

**ມາດຕາ 2:** ບັນດາທ່ານຄະນະບໍລິຫານງານ, ຫ້ອງການສາຂາສະມາຄົມຄົນພິການແຫ່ງຊາດລາວ ປະຈຳແຂວງຈຳປາສັກ, ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 3:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງຈຳປາສັກ ເຈົ້າແຂວງ

ດຣ ບຸນທອງ ດີວິໄຊ